ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເລກທີ.240../ຈຂ.ອຊ

ລົງວັນທີ.20/3.../2017

# ຄຳສັ່ງ

## ວ່າດ້ວຍການໃຫ້ເພີ່ມທະວີຄວາມເອົາໃຈໃສ່ ໃນການຈັດຕັ້ງປະຕິບັດ ຕໍ່ວຽກງານທະບຽນສານ

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ 4 ມາດຕາ 20 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມ : ກົດໝາຍວ່າດ້ວຍທະບຽນສານ ສະບັບເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009.
- ອີງຕາມ : ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 10/ນຍ, ລົງວັນທີ 1 ເມສາ 2016 ວ່າດ້ວຍ ການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ.

ເພື່ອຈັດຕັ້ງຜັນຂະຫຍາຍວຽກງານທະບຽນສານ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 10/ນຍ, ລົງວັນທີ 1 ເມສາ 2016 ໃນການຢັ້ງຢືນຄວາມຖືກຕ້ອງເປັນຈິງ ແລະ ຕາມກົດໝາຍຂອງສັນຍາ ແລະ ເອກະສານອື່ນ ແນ່ໃສ່ປະກອບສ່ວນປົກປັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

### ເຈົ້າແຂວງອຸດົມໄຊ ຄຳສັ່ງ:

1. ໃຫ້ບັນດາພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ, ບັນດາເມືອງ, ບັນດາຫ້ອງການອ້ອມຂ້າງເມືອງ, ຫົວໜ່ວຍທຸລະກິດ ແລະ ພົນລະເມືອງທຸກຄົນທົ່ວແຂວງອຸດົມໄຊ ເອົາໃຈໃສ່ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນສານ ເປັນຕົ້ນທຸກສັນຍາ ແລະ ທຸກເອກະສານ ທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍວ່າດ້ວຍທະບຽນສານ ( ມີລາຍການເອກະສານຕິດຄັດມາພ້ອມ ) ກ່ອນຈະນຳໄປຈັດຕັ້ງປະຕິບັດ ຫຼື ນຳໄປຂຶ້ນທະບຽນຊັບສິນຢູ່ພະແນກການເງິນແຂວງ ຫຼື ຫ້ອງການການເງິນ, ນັ້ນຕ້ອງໄດ້ໄປຜ່ານການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຕາມກົດໝາຍຢູ່ອົງການທະບຽນສານເສຍກ່ອນ, ທຸກໆເອກະສານ ຫຼື ສັນຍາ ທີ່ກ່າວມານັ້ນຈະຖືວ່າມີຜົນສັກສິດທາງດ້ານກົດໝາຍກໍ່ຕໍ່ເມື່ອໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຕາມກົດໝາຍຈາກອົງການທະບຽນສານເທົ່ານັ້ນ.

2. ໃນກໍລະນີສັນຍາ ຫຼື ເອກະສານສະບັບໃດທີ່ໄປຂໍຂຶ້ນທະບຽນຊັບສິນ ຢູ່ພະແນກການເງິນແຂວງ ຫຼື ຫ້ອງການການເງິນເມືອງ ຫຼື ນຳໄປຈັດຕັ້ງປະຕິບັດຢູ່ອົງການລັດໃດໜຶ່ງ ຫາກບໍ່ທັນໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຕາມກົດໝາຍຈາກອົງການທະບຽນສານ ແມ່ນໃຫ້ອົງການລັດທີ່ກ່ຽວຂ້ອງນັ້ນ ແນະນຳໃຫ້ຜູ້ກ່ຽວຂ້ອງນຳເອົາເອກະສານ ຫຼື ສັນຍານັ້ນໄປຢັ້ງຢືນຄວາມຖືກຕ້ອງຕາມກົດໝາຍຈາກອົງການທະບຽນສານເສຍກ່ອນ.

3. ການເກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຢູ່ອີງການທະບຽນສານແມ່ນໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ່ 003/ປປທ, ລົງວັນທີ່ 26 ທັນວາ 2012 ແລະ ຄຳແນະນຳຂອງລັດຖະມົນຕີຂອງກະຊວງຍຸຕິທຳເລກທີ 873/ກຍ, ລົງວັນທີ 10 ຕຸລາ 2014 ຢ່າງເຂັ້ມງວດ.

4. ມອບໃຫ້ພະແນກຍຸຕິທຳ ແຂວງອຸດົມໄຊ ເປັນເຈົ້າການໃນການປະສານສົມທົບ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ, ພ້ອມທັງສະຫຼຸບ ແລະ ລາຍງານໃຫ້ການນຳແຂວງຮັບຊາບຢ່າງເປັນປົກກະຕິ.

ເມື່ອໄດ້ຮັບຄຳສັ່ງສະບັບນີ້ແລ້ວຈົ່ງພ້ອມກັນຈັດຕັ້ງປະຕິບັດໃຫ້ເຂັ້ມງວດ.

**ເຈົ້າແຂວງອຸດົມໄຊ**

ແຂວງອຸດົມໄຊ ... ເຈົ້າແຂວງ

ເພັດສາຄອນ ຫຼວງອາໄພ